ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ບໍລິຈາກເລືອດຊ່ວຍເຫຼືອສັງຄົມ






ໃນຕອນເຊົ້າວັນທີ 14 ສິງຫາ 2020 ທີ່ສະໂມສອນໃຫຍ່ສະຖາບັນການທະນາຄານນະຄອນຫຼວງວຽງຈັນ, ທະນາຄານແຫ່ງ ສປປ ລາວ ໄດ້ຈັດຂະບວນການບໍລິຈາກເລືອດເພື່ອຊ່ວຍເຫລືອສັງຄົມຂຶ້ນ ໂດຍການເປັນປະທານຂອງສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ຄະນະພັກ ທຫລ, ຫົວໜ້າກົມບັນຊີ ແລະ ການເງິນ, ປະທານສະຫະພັນກຳມະບານ ທຫລ ແລະ ສະຫາຍ ດຣ. ຈັນທະລາ ສຸກສາຄອນ ຫົວໜ້າສູນເລືອດແຫ່ງຊາດ, ອົງການກາແດງລາວພ້ອມທັງແຂກຖືກເຊີນເຂົ້າຮ່ວມຢ່າງຫຼວງຫລາຍ.

ສະຫາຍ ນາງ ຂັນແກ້ວ ຫຼ້າມະນີເງົາ ໄດ້ໃຫ້ຮູ້ວ່າ "ໃນທ່າມກາງບັນຍາກາດທີ່ທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດພວມອອກແຮງສູ້ຊົນຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ VIII ເວົ້າລວມ, ເວົ້າສະເພາະຖັນແຖວສະມາຊິກພັກ, ພະນັກງານ ແລະ ສະມາຊິກສາມອົງການຈັດຕັ້ງມະຫາຊົນໃນຂະແໜງທະນາຄານພວມອອກແຮງສ້າງຜົນງານ, ສ້າງຂະບວນການດ້ານຕ່າງໆເພື່ອຂໍ່ານັບຮັບຕ້ອນກອງປະຊຸມໃຫຍ່ຄັ້ງທີ IV ຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ຢ່າງເປັນຂະບວນຟົດຟື້ນ ແລະ ກວ້າງຂວາງທະນາຄານແຫ່ງ ສປປ ລາວ ກໍຄືຄະນະຮັບຜິດຊອບຂະບວນການໄດ້ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ຫ້າງຫາກະກຽມເພື່ອຈັດຂະບວນການບໍລິຈາກເລືອດຊ່ວຍເຫຼືອສັງຄົມຄັ້ງນີ້ຂຶ້ນ ໂດຍມີຜູ້ເຂົ້າຮ່ວມທັງໝົດ 285 ຄົນ, ໃນນີ້ມີຜູ້ບໍລິຈາກເລືອດຈຳນວນ 205 ຄົນ, ສາມາດບໍລິຈາກໄດ້ 175 ຄົນຊຶ່ງມາຈາກບັນດາຄະນະພັກຮາກຖານ, ໜ່ວຍພັກອ້ອມຂ້າງອົງຄະນະພັກ ທຫລ, ບັນດາກົມ-ທຽບເທົ່າພາຍໃນ ທຫລ ແລະ ບັນດາທະນາຄານທຸລະກິດ.




ເພື່ອເຮັດໃຫ້ຂະບວນການບໍລິຈາກເລືອດຊ່ວຍເຫຼືອສັງຄົມໃນຄັ້ງນີ້ມີເນື້ອໃນເລິກເຊິ່ງແລະເປັນການໂຄສະນາເຜີຍແຜ່ ແລະ ສ້າງຄວາມເຂົ້າໃຈໃນວຽກງານວຽກງານບໍລິຈາກເລືອດຊ່ວຍເຫຼືອສັງຄົມ ສະຫາຍ ດຣ. ຈັນທະລາ ສຸກສາຄອນ ໄດ້ໃຫ້ກຽດເຜີຍແຜ່ຄວາມໝາຍ-ຄວາມສຳຄັນຂອງການບໍລິຈາກເລືອດຊ່ວຍເຫຼືອສັງຄົມ ແລະ ຍັງໄດ້ຕອບຄຳຖາມຂໍ້ຂ້ອງໃຈກ່ຽວກັບການບໍລິຈາກເລືອດອີກດ້ວຍ.

**# ຂ່າວໂດຍ: ນາງ ປານີ ພັນທະລາ**

**# ພາບໂດຍ: ທ່ານ ສົມອິກ ເຄນຄຳແພງ**

## ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ